ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມຄະນະກຳມະການສະເຖຍລະພາບດ້ານການເງິນຂອງສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ



ວັນທີ 31 ກໍລະກົດ 2023, ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມຄະນະກຳມະການສະເຖຍລະພາບດ້ານການເງິນຂອງສະພາບໍລິຫານ ທຫລ ໂດຍການເປັນປະທານຂອງ ທ່ານ ນ. ຂັນແກ້ວ ຫຼ້າມະນີເງິາ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານຄະນະກຳມະການ ແລະ ມີສະມາຊິກຄະນະກຳມະການຈາກພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນທ່າມກາງບັນຍາກາດທີ່ທົ່ວຂະແໜງການທະນາຄານພວກເຮົາ ກຳລັງສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງພັກ ຄັ້ງທີ XI ກໍຄື ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກ ທະນາຄານແຫ່ງ ສປປ ລາວ ຄັ້ງທີ IV, ປະຕິບັດແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາຂອງ ສປປ ລາວ ໄລຍະ 10 ປີ ແຕ່ປີ 2016-2025 ແລະ ວິໄສທັດຮອດປີ 2030 ເວົ້າລວມ, ເວົ້າສະເພາະແມ່ນການຈັດຕັ້ງປະຕິບັດແຜນງານ-ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ທະນາຄານທຸລະກິດ ແຕ່ປີ 2021-2025 ເພື່ອສືບຕໍ່ສ້າງຄວາມພ້ອມ ໃຫ້ແກ່ການເຊື່ອມໂຍງພາກພື້ນ ແລະ ສາກົນ. ສະນັ້ນ, ກອງປະຊຸມຂອງຄະນະກຳມະການສະເຖຍລະພາບດ້ານການເງິນ ຂອງສະພາບໍລິຫານ ທະນາຄານແຫ່ງ ສປປ

ລາວ ໄດ້ຈັດກອງປະຊຸມຂຶ້ນ ເພື່ອປຶກສາຫາລືວຽກງານບູລິມະສິດທີ່ສຳຄັນ ທີ່ຕິດພັນກັບການຮັກສາສະເຖຍລະພາບຂອງສະຖາບັນການເງິນ ແລະ ກຳນົດກົນໄກການເຮັດ ວຽກຂອງຄະນະ. ໃນນີ້, ທ່ານ ອາລຸນ ບຸນຍົງ ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ຮອງປະທານຄະນະກຳມະການ ໄດ້ລາຍງານຕໍ່ກອງປະຊຸມ ໂດຍມີດັ່ງນີ້: 1) ສະພາບການຈັດຕັ້ງປະຕິບັດວຽກງານຮັກສາສະເຖຍລະພາບທາງດ້ານການເງິນ 6 ເດືອນຕົ້ນປີ 2023 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; 2) ການພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ແລະ ການຄຸ້ມຄອງຕາມຄວາມສ່ຽງ; 3) ການທົບທວນຄືນການປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກ COVID-19; 4) ການຄົ້ນຄວ້ານະໂຍບາຍຄຸ້ມຄອງສິນເຊື່ອໃຫ້ທະນາຄານທຸລະກິດ; 5) ການປັບປຸງໂຄງສ້າງຂອງ ທະນາຄານນະໂຍບາຍ; ແລະ 6) ການຄຸ້ມຄອງຫົວໜ່ວຍວິຊາການທີ່ປິ່ນອ້ອມ.

ຜ່ານການປຶກສາຫາລືຢ່າງເລິກເຊິ່ງ ແລະ ກວ້າງຂວາງ, ປະທານກອງປະຊຸມ ໄດ້ມີທິດຊີ້ນຳໃຫ້ຄະນະກຳມະການເອົາໃຈໃສ່ຢ່າງຕັ້ງໜ້າໃນການປະຕິບັດພາລະບົດບາດຮັກສາສະເຖຍລະພາບຂອງລະບົບສະຖາບັນການເງິນຜ່ານການຄຸ້ມຄອງການເຄື່ອນໄຫວຂອງສະຖາບັນການເງິນດ້ວຍຫຼາຍຮູບການ ພ້ອມທັງໄດ້ມີທິດຊີ້ນຳເປັນອັນລະອຽດຕໍ່ວຽກງານບູລິມະສິດຕ່າງໆຂອງຄະນະກຳມະການ ເພື່ອແນ່ໃສ່ເຮັດໃຫ້ລະບົບສະຖາບັນການເງິນມີຄວາມໝັ້ນຄົງ, ເຂັ້ມແຂງ ແລະ ມີສະເຖຍລະພາບ ສາມາດປະກອບສ່ວນສຳຄັນໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃຫ້ມີການຂະຫຍາຍຕົວ ຕາມທິດເຂັ້ມແຂງ ແລະ ຍືນຍົງ.



ຂ່າວ : ກົມຄຸ້ມຄອງທະນາຄານທຸລະກິດ, ທຫລ

ພາບ: ນ. ວັນປະເສີດ ສີມບູນຂັນ

*ຢູ່ເມືອງລາວໃຊ້ເງິນກີບລາວ*